# ໂຄງການ ການເມືອງ ໑໓ ຂໍ້

ພຣະຣາຊະນະຄອນ ຫລວງພຣະບາງ

໒໓ ທັນວາ ໑໙໗໔

ພິມເທື່ອໃຫມ່ ຕາມເຄົ້າ ເອກສານ ຄັ້ງທີນຶ່ງ

ເມື່ອວັນທີ ໒໗-໐໗-໒໐໐໘ ພ.ສ. ໒໕໔໙

ລິຂດິດ: ນາງ ນ້ອຍ ບາສີ

ຄນະບັນນາທິການ ຂໍມອບຄວາມຊົງຈໍາ ຜ່ານຫນັງສືເຫລັ້ມນີ້ ແດ່ ດວງວິນຍານ ຂອງ ຄົນລາວຜູ່ຮັກຊາດທຸກຄົນ ທີ່ຕໍ່ສູ້ ເພື່ອຄວາມເປັນລາວ ແລະ ເພື່ອໃຫ້ລູກລາວຫລານລາວທຸກຄົນ ໄດ້ຢູ່ໃນຄວາມສງົບ ແລະສາມາດມີອະນາຄົດ ຢູ່ໃນບົນຜືນແຜ່ນດິນແຫ່ງປະເທດລາວອັນນີ້ຕລອດໄປ ໄຮ້ການຍຶດຄອງຂອງຕ່າງປະເທດ.

© ໒໐໐໘ ນ້ອຍ ບາສີ

# ຄຳນຳ

ເອກສານ ອັນນ້ອຍໆອັນນີ້ ເປັນເອກສານອັນສຳຄັນທີ່ສຸດ ຊຶ່ງຄົນລາວມີຄວາມປິ້ມໃຈ ໃນ ການທ້ອນໂຮມ ລາວ ຍ້ອນບໍ່ຢາກໃຫ້ຄົນລາວ ທຳສົງຄາມກັນອີກຕໍ່ໄປ ແລະ ເພື່ອບໍ່ຢາກໃຫ້ຝ່າຍ ແນວລາວຮັກຊາດ ຕົກໄປເປັນເຄື່ອງມືຂອງວຽດນາມເຫນືອ. ກົງກັນຂ້າມ ຫນັງສືອັນນີ້ ໄດ້ກາຍມາເປັນຄາຕກອນໄປໃນຕົວເລີຍ ຍ້ອນວ່າ ລາວທັກຫລັງລາວ ເພື່ອ ຍອມຮັບເອົາ ແກວ ມາຍຶດເອົາ ປະເທດ ຂອງ ຕົນ. ພວກຫນຸ່ມນ້ອຍ ທີ່ຫາກໍກັບຈາກ ປະເທດ ຝຣັ່ງ, ການາດາ ແລະ ພວກສມຸນ ຂັ້ນຈຳ ຂອງ ເຈົ້າ ສຸວັນນະພູມາ ຮູ້ເຣື່ອງນີ້ດີ. ຄົນລາວເກືອບທຸກຄົນ ຖືກແກວໃຊ້ ໃຫ້ເປັນພຽງແຕ່ ໄກ່ຕໍ່ ຍ່າງດຽວເທົ່ານັ້ນເອງ.

ອັນແປກປລາດທີ່ສຸດຄື ເມື່ອເຮົາອ່ານເອກສານອັນນີ້ ເຮົາຈະເຫັນໄດ້ວ່າ ເນື້ອໃນ ໃຈ ຄວາມຂອງມັນ ກ້ຽວໄປໂງມາຢູ່ບ່ອນເກົ່າຕລອດ ຊຶ່ງທາງບັນນາທິການເຮົາຂໍໃຫ້ ທ່ານ ຜູ້ອ່ານ ເປັນຜູ້ເຈັຽຣະໄນເອົາເອງ.

ເອກສານເຫລັ້ມນີ້ ໄດ້ມາຈາກ ທ່ານນາຍທະຫານຂັ້ນພັນເອກຜູ້ນຶ່ງ ຊຶ່ງເພິ່ນໄດ້ ເກັບກຳເອົາມ້ຽນ ໃນຕອນທີ່ເພິ່ນຍັງຮຽນເສນາທິການຢູ່ ວຽງຈັນ ເມື່ອປີ ໑໙໗໕.

ພວກເຮົາບໍ່ໄດ້ດັດແປງ ການສະກົດຫລື ດັດແປຄຳສັບໃດໆ ໃນຫນັງສືເຫລັ້ມນີ້ ແມ້ ແຕ່ການຍະວ່າງ ກໍໄດ້ຖືເອົາຕາມເດີມເຄົ້າ ໃນການລອກກ່າຍ ເອກສານ ອັນນີ້ ນອກຈາກ ຮູບຂອງຕົວຫນັງສືເທົ່ານັ້ນ. ທັງນີ້ ກໍເພື່ອຢາກໃຫ້ທ່ານໄດ້ສັງເກດເຫັນ ຈຸດອ່ອນ, ຈຸດ ເດັ່ນ ແລະ ຄວາມສາມາດ ຂອງຄົນຈຳພວກທີ່ມີການກ່ຽວຂ້ອງ ກັບ ເອກສານ ອັນນີ້.

ເມື່ອວັນທີ ໖-໐໖-໒໐໐໖ ເດືອນ ມິຖຸນາ ພ.ສ. ໒໕໔໙ ແຫ່ງເມືອງ ປາຣີສ໌.

ກອງບັນນາທິການ

# ພຣະຣາຊອານາຈັກລາວ
## ສັນຕິພາບ ເອກຣາດ ເປັນກາງ
## ປະຊາທິປະໄຕ ເອກພາບ ວັທນາຖາວອນ

# ໂຄງການ

## ສ້າງສັນຕິພາບ, ເອກຣາດ,
## ຄວາມເປັນກາງ, ປະຊາທິປະໄຕ,
## ເອກພາບ ແລະ ຄວາມວັທນາຖາວອນ

ຂອງ

## ພຣະຣາຊອານາຈັກລາວ

ຈັດພິມໂດຍ
ກະຊວງຖແລງຂ່າວ, ໂຄສະນາການ, ແລະທ່ອງທ່ຽວ
໒໐ ກຸມພາ ໑໙໗໕

# ໂຄງການ

## ສ້າງສັນຕິພາບ, ເອກຣາດ, ຄວາມເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ຄວາມວັທນາຖາວອນ

ຂອງ

## ພຣະຣາຊອານາຈັກລາວ

# ໂຄງການສ້າງສັນຕິພາບ, ເອກຣາດ, ຄວາມເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ຄວາມວັທນາຖາວອນຂອງ ພຣະຣາຊອານາຈັກລາວ.

- ໂດຍອີງໃສ່ຈິດໃຈຂອງສັນຍາວຽງຈັນ ລົງວັນທີ ໒໑ ກຸມພາ ໑໙໗໓, ກ່ຽວກັບການພື້ນຟູສັນຕິພາບ ແລະການປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ໃນລາວ ແລະຂອງອະນຸສັນຍາ ຂອງ ສັນຍາດັ່ງກ່າວ, ໂດຍອີງໃສ່ຈິດໃຈຂອງສັນຍາເຊີແນວ ປີ ໑໙໖໒ ກ່ຽວກັບລາວ,

- ໂດຍອີງໃສ່ສະພາບຄວາມເປັນຈິງ ຂອງສັງຄົມລາວປັດຈຸບັນນີ້ ຕາມລາຍງານການເມືອງຂອງສະເດັດປະທານ ເຈົ້າສຸພານຸວົງ ທີ່ໄດ້ສເນີຕໍ່ກອງປະຊຸມຄນະມົນຕຣີຄົບຄນະສມັຍສາມັນທີ່ນຶ່ງ, ວາຣະທີ່ສາມ,

- ເພື່ອສ້າງພຣະຣາຊອານາຈັກລາວ ໃຫ້ມີສັນຕິພາບ, ເອກຣາດ, ຄວາມເປັນກາງ, ປະຊາທິປະໄຕ, ເອກພາບ ແລະຄວາມວັທນາຖາວອນ, ເຊິ່ງສອດຄ່ອງກັບສິດປໂຍດສູງສຸດ ຂອງປະເທດຊາດ ແລະ ຕອບສນອງຄວາມມຸ້ງມາດປາຖນາອັນແຮງກ້າຂອງປະຊາຊົນ ບັນດາຊົນຊາດຊົນເຜົ່າ ແລະ ພຣະຣາຊປະສົງອັນສູງສົ່ງຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ,

ຄນະມົນຕຣີປະສົມການເມືອງແຫ່ງຊາດ ໃນກອງປະຊຸມສາມັນທີນຶ່ງ, ວາຣະທີສາມ ເມື່ອວັນທີ ໑໐ ພຶສພາ ໑໙໗໔ ແລະ ວາຣະທີສີ່ ເມື່ອວັນທີ ໑໔ ພຶສພາ ໑໙໗໔ ໄດ້ພິຈາຣະນາ ແລະ ຜ່ານເປັນເອກສັນຣັບຮອງເອົາໂຄງການສ້າງສັນຕິພາບ, ເອກຣາດ, ຄວາມເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ຄວາມວັທນາຖາວອນຂອງ ພຣະຣາຊອານາຈັກລາວ ດັ່ງລຸ່ມນີ້, ເພື່ອຈະໃຫ້ຣັຖບານປະສົມຊົ່ວຄາວແຫ່ງຊາດ ເອົາເປັນແນວທາງດຳເນີນງານຮ່ວມ ໃຫ້ແກ່ບັນດາອົງການປົກຄອງຂອງຣັດ, ແລະ ເອົາເປັນທິດທາງແຫ່ງຄວາມບາກບັ່ນ ພະຍາຍາມຂອງປະຊາຊົນພົລເມືອງ, ຂອງກອງທະຫານ ແລະ ຂອງກຳລັງປ້ອງກັນຄວາມສງົບໃນທົ່ວປະເທດ.

## <u>ໜ້າທີ່ລວມ</u> :

ໃນສະພາບການຂອງໂລກປະຈຸບັນນີ້, ອິທິກຳລັງຮຸກຮານ ແລະ ກະຫາຍສົງຄາມ ພວມຖືກຂະບວນການຕໍ່ສູ້ຂອງປະຊາຊົນໃນທົ່ວໂລກ ເພື່ອສັນຕິພາບ, ເອກຣາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ ໂຈມຕີໃຫ້ມັນບມື້ລ່າຖອຍໄປ. ການຕໍ່ສູ້ອັນຍືດເຍື້ອຍາວນານ ແລະ ພິຣະອາດຫານ ຂອງປະຊາຊົນລາວ ເຮົາຕ້ານອິທິກຳລັງ ລ່າເມືອງຂຶ້ນຮຸກຮານ ກໍໄດ້ຍາດເອົາໄຊຊະນະ ອັນໃຫຍ່ຫລວງ ແລະ ສງ່າຣາສີ. ສັນຍາວຽງຈັນ ເມື່ອວັນທີ ໒໗ ກຸມພາ ໑໙໗໓ ແລະ ອະນຸສັນຍາເມື່ອວັນທີ ໑໔ ກັນຍາ ໑໙໗໓ ໄດ້ບົ່ງໄວ້ວ່າ : ອະເມຣິກາ, ໄທ ແລະ ປະເທດອື່ນໆ ຕ້ອງເຄົາຣົບນັບຖືບັນດາສິດພື້ນຖານແຫ່ງຊາດ ອັນສັກຣະບູຊາ ທີ່ບໍ່ມີຜູ້ໃດຈະລ່ວງລະເມີດໄດ້ ຄື: ເອກຣາດ, ອະທິປະໄຕ ເອກພາບ ແລະ ບູຣະນະພາບ ແຫ່ງດິນແດນ ຂອງຣາຊອານາຈັກລາວ; ຕ່າງປະເທດຕ້ອງຢຸດເຊົາທຸກການແຊກແຊງ, ການຮຸກຮານ ແລະ ການຕິດພັນທຸກຢ່າງ ທາງດ້ານການທະຫານຢູ່ໃນລາວ; ບັນດາຝ່າຍລາວທີ່ກ່ຽວຂ້ອງ ຕ້ອງຮັບປະກັນໃຫ້ມີການຢຸດຍິງ ແລະ ຢຸດເຊົາທຸກການກະທຳທາງດ້ານການທະຫານ ທີ່ເປັນປໍຣະປັກຕໍ່ກັນ, ຮັບປະກັນບັນດາສິດເສຣີພາບ ປະຊາທິປະໄຕຂອງປະຊາຊົນຢ່າງຄົບຖ້ວນ, ເຮັດໃຫ້ນະຄອນຫລວງວຽງຈັນ ແລະ ພຣະຣາຊນະຄອນຫລວງພຣະບາງເປັນກາງ, ສ້າງຕັ້ງຄນະມົນຕຣີປະສົມການເມືອງແຫ່ງຊາດ ແລະ ຣັຖບານປະສົມຊົ່ວຄາວແຫ່ງຊາດຊຸດໃໝ່, ກຽມທຸກເງື່ອນໄຂສະດວກ ເພື່ອດຳເນີນການເລືອກຕັ້ງທົ່ວໄປ ຕາມຫລັກການເສຣີພາບ ແລະ ປະຊາທິປະໄຕຢ່າງແທ້ຈິງ ເພື່ອເລືອກຕັ້ງເອົາສະພາຜູ້ແທນຣາສດອນ ແລະ ສ້າງຕັ້ງຣັຖບານປະສົມແຫ່ງຊາດຊຸດສົມບູນ, ປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກພາບຂອງຊາດ.

ມັນເປັນທັມດາຢູ່ແລ້ວວ່າ ເພື່ອໃຫ້ສັນຍາ ແລະ ອະນຸສັນຍາດັ່ງກ່າວ ໄດ້ຮັບການປະຕິບັດຢ່າງເດັດຂາດ ເຄິງຄອງ ແລະ ເພື່ອສ້າງພຣະຣາຊອານາຈັກລາວ ໃຫ້ມີສັນຕິພາບ, ເອກຣາດ, ຄວາມເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ຄວາມວັທນາຖາວອນນັ້ນ, ປະຊາຊົນລາວເຮົາ ຍັງຈະຕ້ອງຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກລຳບາກຕ່າງໆ ນາໆ ເຊິ່ງແມ່ນອິທິກຳລັງລ່າເມືອງຂຶ້ນຂອງຕ່າງປະເທດ ແລະ ພວກປະຕິການລູກມືຂອງຈັກພັດຢູ່ພາຍໃນປະເທດໄດ້ກໍ່ຂຶ້ນຢູ່ໃນດິນແດນລາວເຮົາ.

ເພາະສະນັ້ນ <u>ໜ້າທີ່ອັນຍິ່ງໃຫຍ່ ແລະຮີບດ່ວນ</u>ຂອງປະຊາຊົນລາວເຮົາ ທຸກຊົນຊາດ ຊົນ

ເຜົ່າ, ຂອງສະມາຊິກແຫ່ງອົງການປົກຄອງຂອງຣັດ, ຂອງບັນດາກຳລັງການເມືອງ, ຂອງບັນດາຜູ້ຊົງຄຸນວຸດທິ, ນັກຮຽນຮູ້, ປັນຍາຊົນ, ພຣະສົງອົງເຈົ້າ, ຂ້າຣາຊການ, ທະຫານ, ຕຳຣວດທີ່ຮັກຊາດ, ຮັກສັນຕິພາບ, ຮັກເອກຣາດ, ຮັກຄວາມເປັນກາງ ແລະ ຮັກປະຊາທິປະໄຕນັ້ນແມ່ນ:

ເພີ່ມທວີຄວາມສາມັກຄີປວງຊົນທັງຊາດ, ເພີ່ມທວີຄວາມສາມັກຄີ ແລະ ມິຕພາບ ກັບທຸກປະຊາຊາດໃນໂລກ, ກ່ອນອື່ນແມ່ນກັບບັນດາປະເທດໃກ້ຄຽງ, ອອກແຮງສູ້ຊົນ ເຮັດໃຫ້ສັນຍາ ແລະ ອະນຸສັນຍາວຽງຈັນ ປີ ໑໙໗໓ ໄດ້ຮັບການເຄົາຣົບນັບຖື ແລະ ປະຕິບັດຢ່າງຄົບຖ້ວນ, ຕໍ່ສູ້ຢ່າງທົນທານໝຽວແໜ້ນຕ້ານລັດທິລ່າເມືອງຂຶ້ນແບບໃໝ່ ຂອງອະເມຣິກາ ແລະ ພວກຂັດຂວາງມ້າງເພສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດຢູ່ພາຍໃນປະເທດ, ເພື່ອປັບປຸງ ແລະປົກປັກຮັກສາສັນຕະພາບ ໃຫ້ໝັ້ນຄົງເທີງນານ, ສຳເຣັດ ແລະ ປັບປຸງເອກຣາດຂອງຊາດ, ປະຕິບັດບັນດາ ສິດເສຣີພາບ ປະຊາທິປະໄຕຂອງປະຊາຊົນ, ປະຕິບັດການໄກ່ເກັ່ຽກັນ ຈົນກ້າວໄປເຖິງຄວາມຖືກຕ້ອງປອງດອງຊາດ ແລະ ເອກພາບຂອງຊາດ; ພ້ອມກັນນັ້ນ ກໍອອກແຮງກໍ່ສ້າງ ແລະ ພັທນາເສດກິດ ແລະ ວັທນະທັມ, ປັວແປງຊີວິດການເປັນຢູ່ ຂອງປະຊາຊົນ ໃຫ້ດີຂຶ້ນ, ສ້າງພຣະຣາຊອານາຈັກລາວ ໃຫ້ມີສັນຕິພາບ, ເອກຣາດ, ຄວາມເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ຄວາມວັທນາຖາວອນ, ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາ ສັນຕິພາບ, ຢູ່ໃນພາກພື້ນອິນດູຈີນ, ອາຊີອາຄະເນ ແລະ ໃນທົ່ວໂລກ.

ສັນຕິພາບ, ເອກຣາດ, ເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ວັທນາຖາວອນ ນີ້ແມ່ນອົງປະກອບອັນຄົບຖ້ວນອັນນຶ່ງອັນດຽວ ທີ່ມີເນື້ອໃນສນິດຕິດພັນກັນຢ່າງແໜ້ນແຟ້ນ. ສັນຕິພາບອັນໝັ້ນຄົງຢ່າງແທ້ຈິງ ແລະ ຄວາມຖືກຕ້ອງປອງດອງ ແລະ ເອກພາບຂອງຊາດອັນແທ້ຈິງ ບໍ່ອາດຈະມີຂຶ້ນໄດ້, ຕາບໃດປະເທດຊາດ ຫາກບໍ່ໄດ້ມີເອກຣາດອັນສົມບູນ ແລະຕາບໃດປະຊາຊົນ ຫາກບໍ່ໄດ້ຊົມໃຊ້ບັນດາສິດເສຣີພາບປະຊາທິປະໄຕຢ່າງຄົບຖ້ວນ. ຍ້ອນແນວນັ້ນ, ເອກຣາດ, ແລະ ປະຊາທິປະໄຕ ຈຶ່ງເປັນພື້ນຖານໃຫ້ແກ່ການປົກປັກຮັກສາສັນຕິພາບໃຫ້ໝັ້ນຄົງເທີງນານ, ໃຫ້ແກ່ການປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກພາບຂອງຊາດ ແລະ ໃຫ້ແກ່ການກໍ່ສ້າງບ້ານເມືອງໃຫ້ວັທນາຖາວອນ.

# <u>ບັນດາມະໂຍບາຍພາຍໃນປະເທດ</u>

໑- ສາມັກຄີປວງຊົນທັງຊາດ, ສາມັກຄີບັນດາຊົນຊາດຊົນເຜົ່າ, ບັນດາສາສນາ ແລະ ທຸກຊັ້ນຄົນທຸກຊົນຊັ້ນ; ຕໍ່ສູ້ໃຫ້ປະຕິບັດສັນຍາ ແລະ ອະນຸສັນຍາຢ່າງຄົບຖ້ວນ ແລະ ສ້າງພຣະຣາຊອານາຈັກລາວໃຫ້ມີສັນຕິພາບ,ເອກຣາດ,ຄວາມເປັນກາງ,ປະຊາທິປະໄຕ,ເອກພາບ ແລະ ຄວາມວັທນາຖາວອນ.

໒- ປະຕິບັດຄວາມສເມີພາບໃນທຸກດ້ານ : ການເມືອງ, ເສດກິດ, ວັທນະທັມ ແລະ ສັງຄົມຣະຫວ່າງບັນດາຊົນຊາດຊົນເຜົ່າ. ຕົວແທນຂອງບັນດາຊົນຊາດຊົນເຜົ່າ ຕ້ອງມີຖານະເໝາະສົມໃນບັນດາອົງການປົກຄອງທຸກຊັ້ນ, ຕ້ອງຊ່ວຍເຫລືອບັນດາຊົນຊາດສ່ວນໜ້ອຍ ໃນການບົວແປງຊີວິດການເປັນຢູ່ ແລະ ໃນການເຊີດຊູຄວາມຮູ້ຂອງເຂົາເຈົ້າໃຫ້ສູງຂຶ້ນໃນທຸກດ້ານ.

໓- ປະຕິບັດບັນດາສິດເສຣີພາບ ປະຊາທິປະໄຕຂອງປະຊາຊົນຢ່າງຄົບຖ້ວນເຊັ່ນ: ສິດເສຣີພາບສ່ວນບຸກຄົນ, ສິດເສຣີພາບໃນການເຊື່ອຖື, ສິດເສຣີພາບ ໃນການປາກເວົ້າ, ສິດເສຣີພາບໃນການຂີດຂຽນ, ສິດເສຣີພາບໃນການໂຮມຊຸມນຸມ, ສິດເສຣີພາບໃນການສ້າງຕັ້ງພັກ ແລະ ອົງການ ການເມືອງ, ສິດເສຣີພາບໃນການອອກສມັກຮັບເລືອກຕັ້ງ ແລະ ປ່ອນບັດເລືອກຕັ້ງ, ສິດເສຣີພາບໃນການໄປມາ ແລະ ໃນການຕັ້ງພູມລຳເນົາ, ສິດເສຣີພາບໃນການປະກອບວິສາຫະກິດ ແລະ ສິດເສຣີພາບໃນການເປັນເຈົ້າຂອງຊັບສິນສ່ວນຕົວ. ຕ້ອງລົບລ້າງທຸກກົດໝາຍ, ທຸກຂໍ້ກຳນົດ ແລະ ທຸກການຈັດຕັ້ງທັງຫ້າມຂາດທຸກການກະທຳທີ່ຜິດຕໍ່ບັນດາສິດເສຣີພາບ ປະຊາທິປະໄຕຂອງປະຊາຊົນ.

໔- ເລືອກຕັ້ງແບບປະຊາທິປະໄຕ ເພື່ອປັບປຸງບັນດາອົງການປົກຄອງຂອງຣັດ ໃນຂັ້ນບ້ານ ແລະ ຂັ້ນຕາແສງ ໃຫ້ເຂັ້ມແຂງ ແລະ ຄົບຖ້ວນ, ສ່ວນຂັ້ນເມືອງ ແລະ ຂັ້ນແຂວງນັ້ນ, ໃນເມື່ອລໍຖ້າກົດໝາຍເລືອກຕັ້ງທົ່ວໄປ ສບັບໃໝ່ທີ່ຄນະມົນຕຣີຈະສເນີໃນຂ້າງໜ້ານີ້ນັ້ນ, ໃຫ້ປະຕິບັດຕາມທີ່ເຄີຍເຮັດມາ. ສ່ວນຄນະມົນຕຣີນັ້ນ ໃຫ້ມີຢູ່ໃນທຸກຂັ້ນ, ແຕ່ຂັ້ນບ້ານຂຶ້ນຮອດຂັ້ນແຂວງ, ດ້ວຍການເລືອກຕັ້ງແບບປະຊາທິປະໄຕ ກວດກາດັດແປງ ແລະ ແກ້ໄຂເພີ່ມເຕີມກົດໝາຍເລືອກຕັ້ງ ແລະ ຈັດຕັ້ງການເລືອກຕັ້ງທົ່ວໄປຢ່າງມີເສຣີພາບ ແລະ ປະຊາທິປະໄຕ ອັນແທ້ຈິງ ເພື່ອເລືອກຕັ້ງເອົາ ສະພາຜູ້ແທນຣາສດອນ ແລະ

ສ້າງຕັ້ງຣັຖບານປະສົມແຫ່ງຊາດຊຸດສົມບູນ. ປັບປຸງອຳນາດຕຸລາການໃຫ້ມີຄວາມຍຸຕິທັມຢ່າງແທ້ຈິງ, ຄົ້ນຄວ້າດັດແປງ ແລະ ແກ້ໄຂເພີ່ມເຕີມຣັຖທັມມູນ, ບົນພື້ນຖານແຫ່ງການເຄົາຣົບນັບຖືພຣະຣາຊບັນລັງ ແລະ ການຮັບປະກັນສິດເສຣີພາບປະຊາທິປະໄຕ ຂອງປະຊາຊົນຢ່າງເຄັ່ງຄອງ, ເພື່ອສ້າງພຣະຣາຊອານາຈັກລາວ ໃຫ້ມີສັນຕິພາບ, ເອກຣາດ, ຄວາມເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ຄວາມວັທນາຖາວອນ.

໕- ເຄົາຣົບນັບຖືພຣະພຸທສາສນາ ແລະ ສາສນາອື່ນໆ. ປົກປັກຮັກສາວັດວາອາຣາມ ແລະ ໂບດສົມ, ກະຕິວິຫານ ແລະ ບູຊະນີຍະວັດຖຸອື່ນໆ, ປົກປັກຮັກສາສິດສູດມົນ ເທສນາ ຂອງ ພຣະສົງ ແລະ ຂອງນັກບວດສາສນາອື່ນໆ ແລະ ປົກປັກຮັກສາ ສາສະນິກະຊົນຂອງ ທຸກສາສນາ.

໖- ປະຕິບັດສິດສເມີພາບ ຣະຫວ່າງ ເພດຍິງກັບເພດຊາຍໃນທຸກດ້ານ: ການເມືອງ, ເສຖກິດ, ວັທນະທັມ ແລະ ສັງຄົມ, ຊ່ອຍເຫລືອແມ່ຍິງ ໃຫ້ມີລະດັບຄວາມຮູ້ສູງຂຶ້ນໃນທຸກດ້ານ ແລະ ເສີມຂຍາຍຄວາມສາມາດຂອງແມ່ຍິງເຂົ້າໃນທຸກວຽກງານ ກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ, ປົວແປງຊີວິດການເປັນຢູ່ຂອງແມ່ຍິງຜູ້ອອກແຮງງານ ໃນບັນດາຊົນຊາດ ຊົນເຜົ່າ, ພິເສດແມ່ນເອົາໃຈໃສ່ປົກປັກຮັກສາຜູ້ເປັນແມ່ ແລະ ເດັກນ້ອຍ.

໗- ກໍ່ສ້າງພື້ນຖານເສຖກິດການເງິນແຫ່ງຊາດທີ່ເປັນເຈົ້າຕົນເອງ ແລະ ມັ່ງຄັ່ງສົມບູນໄປເທື່ອລະກ້າວ ດ້ວຍວິທີອີງໃສ່ຊັບພະຍາກອນ ທັມຊາດພາຍໃນປະເທດ ແລະ ກຳລັງເຫື່ອແຮງຂອງປະຊາຊົນເຮົາເປັນຕົ້ນຕໍ, ພ້ອມກັນນັ້ນ ກໍຕັ້ງໜ້າສແວງຫາການຊ່ວຍເຫລືອຈາກຕ່າງປະເທດ ອັນບໍ່ມີເງື່ອນໄຂການເມືອງຜູກມັດ, ເພື່ອເຮັດໃຫ້ປະຊາຊົນ ໄດ້ມີຄວາມສຸກ ແລະ ບ້ານເມືອງໄດ້ເຂັ້ມແຂງ.

ຂຍາຍວຽກງານກະສິກັມ, ການປ່າໄມ້, ອຸດສາຫະກັມ ແລະ ຫັດຖະກັມ, ການຄ້າຂາຍ, ການຄົມມະນາຄົມ ແລະ ການຂົນສົ່ງ, ໂດຍຖືເອົາການກະສິກັມ ແລະ ການປ່າໄມ້ເປັນພື້ນຖານໃຫ້ແກ່ການກໍ່ສ້າງ ແລະ ຂຍາຍອຸດສາຫະກັມແຫ່ງຊາດ ໃຫ້ກ້າວຂຶ້ນເຖິງການ ຂຍາຍຕົວຮອບດ້ານ, ພັທນາເສຖກິດແຫ່ງຊາດທີ່ເປັນເຈົ້າຕົນເອງ ແລະ ຮັ່ງມີເຂັ້ມແຂງ, ສົ່ງເສີມການຜລິດ ຂອງປວງປະຊາຊົນທັງຊາດຢ່າງແຂງແຮງ; ພ້ອມກັນນັ້ນກໍເພີ້ມທວີຂົງເຂດເສຖກິດ ເຊິ່ງແມ່ນຣັດເປັນຜູ້ຄຸ້ມຄອງ. ສົ່ງເສີມໃຫ້ເອກຊົນ ປະກອບວິສາຫະກິດຢ່າງອິສຣະ ຫລື ຮ່ວມລົງທຶນນຳຣັດ ຕາມຫລັກການທີ່ເປັນປໂຍດໃຫ້ບ້ານເມືອງ, ທັງຮັບ

ປະກັນສິດປໂຍດຂອງຣັດ ແລະ ຂອງເອກຊົນ. ປະຕິບັດຣະບອບພາສີອາກອນທີ່ມີຍຸຕິທັມ ແລະ ສົມເຫດສົມຜົນ, ແລະ ຣະບອບຄຸ້ມຄອງ ການເງິນອັນຖືກຕ້ອງ ແລະ ເຄັ່ງຄັດ.

໗- ປົກປັກຮັກສາຮີດຄອງປະເພນີ ອັນດີງາມຂອງບັນດາຊົນຊາດຊົນເຜົ່າ, ຂຍາຍວັທນະທັມ ແລະ ການສຶກສາແຫ່ງຊາດ ແລະ ກ້າວໜ້າ, ເຊີດຊູຈິດໃຈຮັກຊາດ, ສະຕິສາມັກຄີມິຕພາບຣະຫວ່າງ ຊົນຊາດຊົນເຜົ່າ ແລະລະດັບວັທນະທັມ, ວິທຍາສາດ ແລະວິທຍາການຂອງປະຊາຊົນ ບັນດາຊົນຊາດຊົນເຜົ່າໃຫ້ສູງຂຶ້ນເທື່ອລະກ້າວ. ປະຕິບັດການສິດສອນ ແລະ ການຮຽນເປັນພາສາລາວ ແລະ ດ້ວຍອັກສອນລາວ ໃນທຸກໂຮງຮຽນທຸກຂັ້ນທຸກປະເພດ; ຂຍາຍການສຶກສາປະເພດຕ່າງໆ ຢ່າງສົມດຸນເຊັ່ນ : ຣະຫວ່າງຂັ້ນສຶກສາສາມັນ, ຂັ້ນມັທຍົມອາຊີວະສຶກສາ, ແລະ ຂັ້ນມະຫາວິທຍາລັຍ; ກໍ່ສ້າງ ແລະ ບຳລຸງຄັນແຖວ ພນັກງານຂ້າຣາຊການ ແລະ ພະລາກອນຜູ້ຊຳນິຊຳນານ ເພື່ອຮັບໃຊ້ພາຣະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ.

໘- ຂຍາຍຕາໜ່າງສາທາຣະນະສຸກໃຫ້ລົງຮອດຕາແສງ ແລະ ໝູ່ບ້ານທີ່ຢູ່ຫ່າງໄກສອກຫລີກ ເພື່ອປ້ອງກັນຮັກສາ ສຸຂພາບຂອງປະຊາຊົນ ບັນດາຊົນຊາດຊົນເຜົ່າ. ກຳຈັດປັດເປົ່າພຍາດຕິດແປດຕ່າງໆ, ກ່ອນອື່ນແມ່ນ ພະຍາດໄຂ້ປ່າ, ຂີ້ທູດ, ການໂຣກ, ພຍາດລຳໃສ້ ແລະ ອື່ນໆ. ຕ້ານການຕາຍໝູ່ນ້ອຍ ແລະ ການຕາຍກຸມຕາຍພາຍ ເພື່ອເພີ່ມຈຳນວນພົລເມືອງໃຫ້ແກ່ບັນດາຊົນຊາດຊົນເຜົ່າ.

໑໐- ຮັບປະກັນໃຫ້ມີວຽກເຮັດງານທຳ ແລະ ປົວແປງຊີວິດການເປັນຢູ່ດ້ານວັດຖຸ ແລະ ດ້ານຈິດໃຈໃຫ້ແກ່ພົລເມືອງທຸກຄົນຢູ່ໃນຕົວເມືອງ ແລະ ຕາມຊົນນະບົດ; ລົບລ້າງການຍຶດເອົາດິນດອນໄຮ່ນາຮົ້ວສວນ, ການໃຊ້ແຮງງານ ແລະ ການປະກອບວັດຖຸອັນໜັກໜາຂອງຊາວໄຮ່ນາ ແລະ ຊາວກັມກອນ. ຊ່ວຍເຫລືອຜູ້ປະສົບພັຍສົງຄາມ ຜູ້ເຖົ້າແກ່ຊະຣາ ແລະ ເດັກກຳພ້າກຳພອຍທີ່ບໍ່ມີບ່ອນເພິ່ງພາອາໄສ, ແລະ ຜູ້ພິການເສັຽອົງຄະ. ຊ່ວຍເຫລືອທະຫານອອກການ, ເປັນຕົ້ນຜູ້ຖືກບາດເຈັບເສັຽອົງຄະ ແລະ ຄອບຄົວຂອງນາຍ ແລະ ພົນທະຫານ ແລະ ຂອງນາຍ ແລະ ພົນຕຳຣວດ ເພື່ອໃຫ້ເຂົາເຈົ້າໄດ້ທຳມາຫາລ້ຽງຊີບ ແລະ ສາມາດປະກອບສ່ວນເຂົ້າໃນການກໍ່ສ້າງ ປະເທດຊາດ ບ້ານເມືອງ. ປົກປັກຮັກສາສິດປໂຍດ ຂອງ ພີ່ນ້ອງຮ່ວມຊາດທີ່ຢູ່ຕ່າງປະເທດ ແລະ ສິດປໂຍດອັນຊອບທັມຂອງຊາວຕ່າງດ້າວ ທີ່ທຳມາຫາລ້ຽງຊີບໂດຍດີ ແລະ ທີ່ເຄົາຣົບນັບຖືກົດໝາຍຂອງບ້ານເມືອງເຮົາ.

໑໑- ລຶບລ້າງຮ່ອງຮອຍຂອງວັທນະທັມ ອັນເສື່ອມຊາມຂອງຕ່າງປະເທດ ແລະ ບັນດາພັຍອັນຕຣາຍທາງດ້ານສັງຄົມ, ເປັນຕົ້ນແມ່ນການລັກປຸ້ນຊ້ຳເຈົ້າເອົາຂອງ, ການໂສເພນີ ແລະ ການພນັນ, ແນ່ໃສ່ຮັບປະກັນຄວາມເປັນຣະບຽບຮຽບຮ້ອຍ ແລະຄວາມສງົບຂອງສັງຄົມ, ປົກປັກຮັກສາຮີດຄອງປະເພນີອັນດີງາມຂອງຊາດ, ປົກປັກຮັກສາຄຸນສົມບັດ ແລະ ກຽດສັກສີຂອງຄົນລາວ ແລະຮຸ່ນໜຸ່ມຍຸວະຊົນ ຍີງຊາຍອັນສົດຊື່ນປອດໃສຂອງຊາດ.

໑໒- ກໍ່ສ້າງກອງທັບ ແລະ ກຳລັງປ້ອງກັນຄວາມສງົບອັນເປັນເອກພາບຂອງຊາດ ໃຫ້ມີນ້ຳໃຈຮັກຊາດ, ຮັກປະຊາຊົນ, ກຽມພ້ອມທີ່ຈະປົກປັກຮັກສາປະເທດຊາດ, ປົກປັກຮັກສາສັນຕິພາບ, ຄວາມສງົບສຸກ, ຊີວິດ ແລະ ຊັບສິນຂອງປະຊາຊົນ. ທະຫານຕ້ອງເຮັດການຜລິດຫາກຸ້ມຕົນເອງສ່ວນໃດ ສ່ວນນຶ່ງ ທາງດ້ານສະບຽງອາຫານ ເພື່ອຈະລຶດຜ່ອນການຫາບແບກຂອງປະຊາຊົນ. ກອງທະຫານຕ້ອງເຂົ້າຮ່ວມໃນການກໍ່ສ້າງເສຖກິດ ແລະ ວັທນະທັມ ແລະ ບົວແປງຊີວິດ ການເປັນຢູ່ຂອງປະຊາຊົນ. ພາຍໃນກອງທັບ ແລະ ໃນກຳລັງປ້ອງກັນຄວາມສງົບຂອງຊາດ ຕ້ອງມີປະຊາທິປະໄຕ ແລະ ເຂັດຂູຣະບຽບວິນັຍ, ເອົາໃຈໃສ່ເບິ່ງແຍງຊີວິດ ການເປັນຢູ່ຂອງນາຍ ແລະ ພົນທະຫານ ແລະ ຂອງນາຍ ແລະ ພົນຕຳຣວດ.

# ບັນດານະໂຍບາຍການຕ່າງປະເທດ

໑- ທວງໃຫ້ບັນດາປະເທດ ທີ່ກ່າວໃນພາກໜ້າທີ່ຮ່ວມອ້າງບົນນີ້ ຕ້ອງເຄົາຣົບນັບຖືບັນດາສິດພື້ນຖານແຫ່ງຊາດ ຄື: ອະທິປະໄຕ, ເອກຣາດ, ເອກພາບ, ແລະ ບູຣະນະພາບແຫ່ງດິນແດນຂອງລາວ. ຕ້ອງປະຕິບັດສັນຍາ ແລະ ອະນຸສັນຍາວຽງຈັນ ປີ ໑໙໗໓ ຢ່າງເຂັ້ມງວດ ແລະ ເຄີງຄອງ, ທວງໃຫ້ ສຫະຣັດອະເມຣິກາ ຕ້ອງປະກອບສ່ວນເຂົ້າໃນການຮຳບາດແຜສົງຄາມຢູ່ໃນລາວ.

໒- ເພີ່ມທວີສັມພັນທະໄມຕຣີກັບ ບັນດາປະຊາຊາດ, ວາງສາຍພົວພັນທາງການທູດກັບທຸກປະເທດທີ່ເຄົາຣົບນັບຖື ເອກຣາດ ແລະ ອະທິປະໄຕຂອງລາວ. ປະຕິບັດຫລັກການຫ້າປະການ ແຫ່ງ ການຢູ່ຮ່ວມກັນໂດຍສັນຕິ, ຂຍາຍການພົວພັນອັນເປັນ ປົກຕິກັບທຸກປະເທດ ໂດຍບໍ່ຈຳແນກຣະບອບການເມືອງ ແລະ ສັງຄົມ, ກ່ອນອື່ນແມ່ນກັບບັນດາປະເທດເພື່ອນບ້ານໃກ້ຄຽງ, ບໍ່ອະນຸຍາດໃຫ້ປະເທດໃດແຊກແຊງເຂົ້າໃນກິຈການພາຍໃນຂອງລາວ, ບໍ່ວ່າຢູ່ພາຍໃຕ້ຮູບການໃດໆ, ລາວບໍ່ເຂົ້າຮ່ວມກຸ່ມສັມພັນ ຫລື ກຸ່ມທະ

ຫານໃດໆ ຫລື ທີ່ມີລັກສນະໃດ ໆ ກໍຕາມ, ທີ່ບໍ່ສອດຄ່ອງກັບແນວທາງສັນຕິພາບ ເອກ ຣາດ ແລະ ເປັນກາງ ຂອງພຣະຣາຊອານາຈັກລາວ.ລາວບໍ່ຮັບຮູ້ການອາຣັກຂາຂອງກຸ່ມສັນ ພັນ ຫລື ກຸ່ມທະຫານໃດໆ.

໓- ຮັບເອົາການຊ່ອຍເຫລືອໂດຍກົງ ແລະ ບໍ່ມີເງື່ອນໄຂການເມືອງຜູກມັດ ຂອງບັນ ດາປະເທດທີ່ມີເຈຕນາດີ ຢາກຊ່ວຍເຫລືອລາວໃນການພື້ນຟູ ແລະ ກໍ່ສ້າງເສຖກິດ ແລະ ຂຍາຍວັທນະທັມ, ບົນພື້ນຖານແຫ່ງການເຄົາຣົບນັບຖື ເອກຣາດ ແລະ ອະທິປະໄຕຂອງ ລາວ.ຂຍາຍການຄ້າ ແລະ ການຮ່ວມມືທາງດ້ານເສຖກິດ ກັບ ທຸກປະເທດຕາມຫລັກການ ສເມີພາບ, ຕ່າງຝ່າຍ ຕ່າງມີປໂຍດ ແລະ ຮັບປະກັນອະທິປະໄຕ ແລະ ເອກຣາດຂອງລາວ.

໔- ເຄົາຣົບນັບຖືສັນຍາຕ່າງໆ ທີ່ລາວໄດ້ເຊັນກັບຕ່າງປະເທດ ເຊິ່ງຍັງສອດຄ່ອງກັບ ຜົນປໂຍດຂອງປະຊາຊົນລາວ. ລົບລ້າງສັນຍາໃດທີ່ຂັດ ແລະ ຜິດຕໍ່ຫລັກການຕ່າງໆ ດັ່ງ ກ່າວ.

໕- ສແວງການເປັນໃຈສນັບສນູນຂອງຣັຖບານ ແລະ ປະຊາຊົນບັນດາປະເທດ ແລະ ຂອງບັນດາອົງການຈັດຕັ້ງສາກົນ ທີ່ມີຕໍ່ພາຣະກິດອັນເປັນທັມແຫ່ງການຕໍ່ສູ້ ເພື່ອປັບ ປຸງສັນຕິພາບໃຫ້ໜັ້ນຄົງເທິງນານ ແລະ ເພື່ອສຳເຣັດ ແລະ ປັບປຸງເອກຣາດ ແລະ ຄວາມ ເປັນກາງ ຂອງ ພຣະຣາຊອານາຈັກລາວ.

໖- ສນັບສນູນທຸກຂບວນການ ຕໍ່ສູ້ຂອງປະຊາຊົນປະເທດຕ່າງໆ ໃນພາກພື້ນອິນດູ ຈີນ,ອາຊີອາຄະເນ ແລະ ໃນທົ່ວໂລກເພື່ອສັນຕິພາບ, ເອກຣາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າ.

ໃນເວລານີ້, ປະເທດເຮົາຍັງຢູ່ໃນສະພາບທີ່ແບ່ງອອກເປັນສອງເຂດ ໂດຍແມ່ນສອງ ຝ່າຍຕ່າງກວດກາຄວບຄຸມ. ແຕ່ວ່າຄວາມມຸ້ງມາດປາຖນາທົ່ວໄປຂອງພີ່ນ້ອງຮ່ວມຊາດ ໃນທົ່ວປະເທດ ແມ່ນຢາກໃຫ້ບ້ານເມືອງມີສັນຕິພາບ, ເອກຣາດ, ຄວາມເປັນກາງ, ປະ ຊາທິປະໄຕ, ເອກພາບ ແລະ ຄວາມວັທນາຖາວອນ. ຍ້ອນແນວນັ້ນທັງສອງຝ່າຍຕ້ອງປະ ຕິບັດແນວທາງ ແລະ ນະໂຍບາຍຕ່າງໆ ທີ່ວາງອອກຢູ່ເທິງນັ້ນຢ່າງເຄັ່ງຄັດຄົບຖ້ວນ ແລະ ເຄິງຄອງ, ຢູ່ໃນທຸກທ້ອງຖິ່ນທີ່ຂຶ້ນກັບເຂດກວດກາຂອງໃຜລາວ, ໂດຍມີການແນະນຳ ເປັນເອກພາບກັນ ຂອງສະຖາບັນສູງສຸດຂອງຣັດ ເຊິ່ງສອງຝ່າຍໄດ້ເປັນເອກສັນກັນສ້າງ ຕັ້ງຂຶ້ນຄື : ຄນະມົນຕຣີປະສົມການເມືອງແຫ່ງຊາດ ແລະ ຣັຖບານປະສົມຊົ່ວຄາວແຫ່ງ

ຊາດ. ພ້ອມກັນນັ້ນທັງສອງຝ່າຍຕ້ອງສືບຕໍ່ເຈຣະຈາ ປຶກສາຫາລືກັນເພື່ອຊອກຫາວິທີການແກ້ໄຂ ບັນດາບັນຫາທີ່ພົວພັນ ຣະຫວ່າງສອງຝ່າຍ ແລະ ຣະຫວ່າງສອງເຂດ ຢ່າງຖືກຕ້ອງເໝາະສົມ, ບົນຈິດໃຈສເມີພາບ, ເຄົາຣົບນັບຖື ແລະ ເຂົ້າໃຈຊຶ່ງກັນ ແລະ ກັນ, ຜ່ອນຜັນສັ້ນຍາວໃຫ້ແກ່ກັນ, ບໍ່ໃຫ້ຝ່າຍໃດໝົບເຕັງ ແລະ ກົນກິນຝ່າຍໃດ, ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ການໄກ່ເກັ່ຍກັນ ຈົນໄປເຖິງຄວາມຖືກຕ້ອງປອງດອງ ແລະ ເອກພາບຂອງຊາດ.

ຄນະມົນຕຣີປະສົມການເມືອງແຫ່ງຊາດ ແລະ ຣັຖບານປະສົມຊົ່ວຄາວແຫ່ງຊາດຂໍຮຽກຮ້ອງຢ່າງສຸດອົກສຸດໃຈ ມາຍັງປວງປະຊາຊົນທຸກຊົນຊາດ ຊົນເຜົ່າ ໃນທົ່ວປະເທດ, ທຸກທ່ານຢູ່ໃນບັນດາອົງການປົກຄອງຂອງຣັດ, ທຸກກຳລັງ ການເມືອງ, ຜູ້ຊົງຄຸນວຸດທິ, ນັກຮຽນຮູ້ ປັນຍາຊົນ, ພຣະສົງອົງເຈົ້າ, ຂ້າຣາຊການ, ທະຫານ ແລະ ຕຳຣວດທີ່ຮັກຊາດ, ຮັກສັນຕິພາບ, ເອກຣາດ, ຄວາມເປັນກາງ ແລະ ປະຊາທິປະໄຕທຸກທ່ານ, ຈົ່ງອອກແຮງສູ້ຊົນເພື່ອປະຕິບັດໂຄງການການເມືອງນີ້ ຢ່າງຄົບຖ້ວນ ເພື່ອກໍ່ສ້າງພຣະຣາຊອານາຈັກລາວໃຫ້ມີສັນຕິພາບ; ເອກຣາດ, ຄວາມເປັນກາງ, ປະຊາທິປະໄຕ, ເອກພາບ ແລະ ຄວາມວັທນາຖາວອນ.

ຄນະມົນຕຣີປະສົມການເມືອງແຫ່ງຊາດ ແລະ ຣັຖບານປະສົມຊົ່ວຄາວແຫ່ງຊາດ ຂໍຮຽກຮ້ອງດ້ວຍຄວາມນັບຖືຢ່າງສູງ ມາຍັງຣັຖບານທຸກປະເທດ ແລະ ປະຊາຊົນຜູ້ຮັກຫອມສັນຕິພາບ ແລະ ຄວາມເປັນທັມໃນທົ່ວໂລກ, ຈົ່ງສືບຕໍ່ສນັບສນູນ ການຕໍ່ສູ້ອັນເປັນທັມຂອງປະຊາຊົນລາວ ທີ່ແນໃສ່ປັບປຸງສັນຕິພາບ ແລະ ເອກຣາດ ແຫ່ງຊາດ, ແລະ ກໍ່ສ້າງບ້ານເມືອງໃຫ້ຈະເຣີນກ້າວໜ້າ %

ທີ່ ພຣະຣາຊະນະຄອນຫລວງພຣະບາງ,

ວັນທີ່ ໒໗ ທັນວາ ໑໙໗໔

ນາຍົກລັດຖະມົນຕີ,
ປະທານກອງປະຊຸມ
ຄະນະລັດຖະບານປະສົມຊົ່ວຄາວແຫ່ງຊາດ,

<u>ລົງພຣະນາມ:</u>
ສເດັດ ເຈົ້າສຸວັນນະພູມາ
(ເຈົ້າກຣົມມະນາ)

ປະທານຄະນະມົນຕີ
ປະສົມການເມືອງແຫ່ງຊາດ,

<u>ລົງພຣະນາມ:</u>
ສເດັດ ເຈົ້າສຸພານຸວົງ

# ໂຄງການ ການເມືອງ ໑໗ ຂໍ້

ພິມເທື່ອໃຫມ່ ຕາມເຄົ້າ ເອກສານ ຄັ້ງທີນຶ່ງ
ເມື່ອວັນທີ ໒໗-໐໗-໒໐໐໘ ພ.ສ. ໒໕໕໑

© ໒໐໐໘ ນ້ອຍ ບາສີ